ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 192 /ຈທວ.ທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 11 SEP 2014

ເຖິງ: ເຈົ້າຂອງວິສາຫະກິດທີ່ກ່ຽວຂ້ອງ, ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ

ເລື່ອງ: ແຈ້ງໂຈະການດຳເນີນທຸລະກິດຊົ່ວຄາວ (ຊື່ເກົ່າ: ທະນາຄານລາວ ຂາເຂົ້າ-ຂາອອກ ຈຳກັດ, ຊື່ໃໝ່: ທະນາຄານ ລາວພັດທະນາການກະເສດ ຈຳກັດ)

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ໜັງສື ສະເໜີໃຫ້ລົບລ້າງໃບທະບຽນວິສາຫະກິດ ທະນາຄານ ລາວພັດທະນາການກະເສດ ຈຳກັດ ຂອງ ກົມຄຸ້ມຄອງທະນາຄານທຸລະກິດ (ທະນາຄານ ແຫ່ງ ສປປ ລາວ) ເລກທີ 601/ກຄທ, ລົງວັນທີ 15 ສິງຫາ 2014;
- ອີງຕາມ ໜັງສືແຈ້ງໂຈະການເຄື່ອນໄຫວຫົວໜ່ວຍທຸລະກິດ ຂອງກົມສ່ວຍສາອາກອນ (ກະຊວງການເງິນ) ເລກທີ 6178/ກງ.ກສອ, ລົງວັນທີ 01 ກັນຍາ 2014;
- ອີງຕາມ ແຈ້ງການ ເລື່ອງການໂຈະການດຳເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ແລະ ການຖອນທະບຽນວິສາຫະກິດ ເລກທີ 1720/ອຄ.ຄພນ, ລົງວັນທີ 09 ກັນຍາ 2011;

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງໃຫ້ເຈົ້າຂອງວິສາຫະກິດທີ່ກ່ຽວຂ້ອງ, ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດ ທົ່ວປະເທດ ໄດ້ຮັບຊາບວ່າ:

1. ທະນາຄານ ລາວພັດທະນາການກະເສດ ຈຳກັດ, ທະບຽນວິສາຫະກິດ ເລກທີ 157/ຈທວ, ລົງວັນທີ 08 ເມສາ 2014, ມີທີ່ຕັ້ງສຳນັກງານຕັ້ງຢູ່ ຖະໜົນ ຫຼວງພະບາງ, ບ້ານ ວັດໄຕນ້ອຍທ່າ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ໂທລະສັບ 020 54624286 **ໄດ້ຖືກໂຈະການດຳເນີນທຸລະກິດຊົ່ວຄາວ** ໃນປະເພດທຸລະກິດຕາມທີ່ໄດ້ບົ່ງໄວ້ ໃນດ້ານຫຼັງໃບທະບຽນວິສາຫະກິດຕາມເຫດຜົນໃນໜັງສື ສະບັບເລກທີ 601/ກຄທ, ລົງວັນທີ 15 ສິງຫາ 2014 ແລະ ເລກທີ 6178/ກງ.ກສອ, ລົງວັນທີ 01 ກັນຍາ 2014 (ໄດ້ຕິດຄັດມາພ້ອມນີ້);

2. ກຳນົດເວລາການໂຈະການດຳເນີນທຸລະກິດຊົ່ວຄາວ: ເລີ່ມແຕ່ວັນທີ 12 ກັນຍາ 2014 ເຖິງ ວັນທີ 12 ຕຸລາ 2014; ໃນໄລຍະດັ່ງກ່າວນີ້ ທະນາຄານ ລາວພັດທະນາການກະເສດ ຈຳກັດ ຈະຕ້ອງປັບປຸງແກ້ໄຂໃຫ້ຖືກຕ້ອງຕາມລະບຽບການ ແລະ ໄດ້ຮັບການຢັ້ງຢືນໃຫ້ສືບຕໍ່ເຄື່ອນໄຫວ ຈາກພາກສ່ວນທີ່ກ່ຽວຂ້ອງ ມາແຈ້ງຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ, ເຈົ້າໜ້າທີ່ທະບຽນວິສາຫະກິດ ຈຶ່ງຈະແຈ້ງລົບລ້າງແຈ້ງການສະບັບນີ້.

ກໍລະນີບໍ່ສາມາດປັບປຸງແກ້ໄຂໃຫ້ຖືກຕ້ອງຄົບຖ້ວນຕາມລະບຽບການຂອງຂະແໜງການກ່ຽວຂ້ອງ ພາຍໃນກຳນົດເວລາທີ່ກຳນົດໄວ້ໃນຂໍ້ 2 ນີ້, ເຈົ້າໜ້າທີ່ທະບຽນວິສາຫະກິດ ຈະໄດ້ແຈ້ງໂຈະການດຳເນີນທຸລະກິດຖາວອນ ແລະ ໃຫ້ຍຸບເລີກວິສາຫະກິດຕາມຂັ້ນຕອນຂອງລະບຽບກົດໝາຍ;

3. ໃນໄລຍະການໂຈະການດຳເນີນທຸລະກິດຊົ່ວຄາວນີ້ ຫ້າມວິສາຫະກິດດັ່ງກ່າວ ເຄື່ອນໄຫວດຳເນີນທຸລະກິດຢ່າງເດັດ ແລະ ຕ້ອງນຳເອົາໃບທະບຽນວິສາຫະກິດ (ຕົ້ນສະບັບ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເກັບຮັກສາໄວ້; ຖ້າຫາກລະເມີດ ຫຼື ບໍ່ປະຕິບັດຕາມແຈ້ງການສະບັບນີ້ ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມ ຈະຖືກປະຕິບັດມາດຕະການຕາມ ມາດຕາ 212 ຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ຈະຖືກສັ່ງໃຫ້ໂຈະການດຳເນີນທຸລະກິດຖາວອນ ແລະ ໃຫ້ຍຸບເລີກ ຕາມຂັ້ນຕອນລະບຽບກົດໝາຍ.

ແຈ້ງມາເພື່ອຊາບ ແລະ ປະຕິບັດ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ພູວົງ ສີທອນວົງ

ບ່ອນສົ່ງ

- ຫ້ອງວ່າການສັດຕູຂະບານ 1 ສະບັບ;
- ທະນາຄານ ແຫ່ງ ສປປ ລາວ 1 ສະບັບ;
- ທະນາຄານ ລາວພັດທະນາການກະເສດ ຈຳກັດ 1 ສະບັບ;
- ກົມສ່ວຍສາອາກອນ 1 ສະບັບ;
- ສະພາການຄ້າ ແລະ ອຸດສາຫະກຳ 1 ສະບັບ;
- ຫ້ອງວ່າການນະຄອນຫຼວງ 1 ສະບັບ;
- ພະແນກອຸດສາຫະກຳ ແລະ ການຄ້າ ນວ 1 ສະບັບ;
- ສຳເນົາ 1 ສະບັບ.

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ພະແນກຄຸ້ມຄອງການເຄື່ອນໄຫວວິສາຫະກິດ
ໂທລະສັບ 021 412011